**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງພາຍໃນ** ເລກທີ 10/ພນ

ນະຄອນຫຼວງວຽງຈັນ, ວັນທີ 24 ສິງຫາ 2016

# ຄໍາແນະນໍາ
# ກ່ຽວກັບ ການສ້າງກົດລະບຽບບ້ານ

- **ອີງຕາມ** ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບປັບປຸງ ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- **ອີງຕາມ** ກົດໝາຍວ່າດ້ວຍ ການສ້າງນິຕິກໍາ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- **ອີງຕາມ** ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງພາຍໃນ ສະບັບເລກທີ 253/ນຍ, ລົງວັນທີ 19 ສິງຫາ 2011.

ເພື່ອເຮັດໃຫ້ການອອກກົດລະບຽບບ້ານຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ; ລັດຖະມົນຕີ ກະຊວງພາຍໃນ ອອກຄໍາແນະນໍາ ດັ່ງນີ້:

## 1. ຈຸດປະສົງ

ຄໍາແນະນໍາສະບັບນີ້ກໍານົດຈຸດປະສົງ, ຄວາມໝາຍ, ທິດນໍາ, ຂັ້ນຕອນການສ້າງ ແລະ ປັບປຸງກົດລະບຽບບ້ານ ເພື່ອໃຫ້ອົງການປົກຄອງບ້ານໃຊ້ໄວ້ເປັນບ່ອນອີງໃນການອອກກົດລະບຽບ ແລະ ຄຸ້ມຄອງບໍລິຫານບ້ານໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ເປັນເອກະພາບກັນ ແນໃສ່:

- ເຮັດໃຫ້ມີການຄຸ້ມຄອງ ແລະ ຮັບປະກັນສິດຜົນປະໂຫຍດຂອງລັດ, ລວມໝູ່, ບຸກຄົນ ແລະ ສັງຄົມພາຍໃນບ້ານ;
- ປະຊາຊົນມີຄວາມສາມັກຄີປອງດອງ, ດໍາລົງຊີວິດ ແລະ ເຄື່ອນໄຫວໄດ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ສອດຄ່ອງກັບຮີດຄອງປະເພນີ, ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສະອາດສວຍງາມ, ມີຄວາມປອດໄພໃນຊີວິດ ແລະ ຊັບສິນ, ປາສະຈາກປາກົດການຫຍໍ້ທໍ້ຕ່າງໆ ແລະ ສາມາດດໍາລົງຊີວິດດ້ວຍຄວາມສະຫງົບສຸກ;
- ໃຫ້ປະຊາຊົນຮັບຮູ້ເຂົ້າໃຈ, ມີການປະກອບສ່ວນຢ່າງເປັນເຈົ້າການໃນການຈັດຕັ້ງປະຕິບັດ;
- ມີການສົ່ງເສີມການຈັດຕັ້ງປະຕິບັດກົດໝາຍ ແລະ ສ້າງສະຕິເຄົາລົບກົດໝາຍຢູ່ຂັ້ນຮາກຖານ.

## 2. ຄວາມໝາຍ

ກົດລະບຽບບ້ານ ແມ່ນນິຕິກໍາ ທີ່ອົງການປົກຄອງບ້ານວາງອອກ ໂດຍການເຫັນດີເປັນເອກະພາບຂອງປະຊາ

ຊົນພາຍໃນບ້ານ ເພື່ອຈັດຕັ້ງປະຕິບັດນິຕິກຳຂອງອົງການລັດ, ຄຸ້ມຄອງຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ; ເພື່ອດັດປັບສາຍພົວພັນລະຫວ່າງຄົນກັບຄົນ, ລະຫວ່າງຄົນ ກັບການຈັດຕັ້ງ ຢູ່ພາຍໃນບ້ານ ແນໃສ່ຮັບປະກັນໃຫ້ປະຊາຊົນບັນດາເຜົ່າ ໄດ້ດຳລົງຊີວິດຢູ່ຮ່ວມກັນຢ່າງສັນຕິ ແລະ ມີຄວາມເປັນລະບຽບຮຽບຮ້ອຍ.

## 3. ທິດນຳ

- ເນື້ອໃນຕ້ອງສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ນິຕິກຳຂອງຂະແໜງການ ຫຼື ນິຕິກຳທີ່ສູງກວ່າ, ຈຸດພິເສດ, ທ່າແຮງ ແລະ ຜົນປະໂຫຍດ ລວມຂອງບ້ານ;
- ເນື້ອໃນກົດລະບຽບບ້ານຕ້ອງຕິດພັນ ແລະ ກວມເອົາ 4 ເນື້ອໃນ 4 ຄາດໝາຍ;
- ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ, ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ, ເສີມຂະຫຍາຍປະຊາທິປະໄຕ ແລະ ຍາດແຍ່ງຄຳເຫັນຢ່າງກວ້າງຂວາງ;
- ມີໂຄງປະກອບທີ່ເໝາະສົມ, ຄຳສັບ, ສຳນວນ, ຄຳເວົ້າທີ່ນຳໃຊ້ ຕ້ອງມີຄວາມໝາຍທີ່ແນ່ນອນ, ຮັດກຸມ, ຊັດເຈນ ແລະ ເຂົ້າໃຈງ່າຍ.

## 4. ຂັ້ນຕອນ

ການສ້າງ ແລະ ປັບປຸງກົດລະບຽບບ້ານແຕ່ລະຄັ້ງຕ້ອງປະຕິບັດຕາມຂັ້ນຕອນລະອຽດ ດັ່ງລຸ່ມນີ້:

**ຂັ້ນຕອນທີ 1:** ນາຍບ້ານ ແຕ່ງຕັ້ງ ແລະ ແບ່ງງານພາຍໃນຄະນະຮັບຜິດຊອບສ້າງ ຫຼື ປັບປຸງກົດລະບຽບບ້ານ ຊຶ່ງປະກອບມີ:

- ນາຍບ້ານ — ເປັນຫົວໜ້າ;
- ຮອງນາຍບ້ານ — ເປັນຄະນະ;
- ອົງການຈັດຕັ້ງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ — ເປັນຄະນະ;
- ບັນດາໜ່ວຍງານຊ່ວຍວຽກບ້ານ — ເປັນຄະນະ;
- ພາກສ່ວນອື່ນໆທີ່ຈຳເປັນ — ເປັນຄະນະ.

**ຂັ້ນຕອນທີ 2:** ຄະນະຮັບຜິດຊອບຄົ້ນຄວ້າສ້າງ ຫຼື ປັບປຸງເນື້ອໃນກົດລະບຽບບ້ານ;

**ຂັ້ນຕອນທີ 3:** ເປີດກອງປະຊຸມບ້ານ ເພື່ອປຶກສາຫາລືປະກອບຄຳເຫັນ ໃສ່ຮ່າງກົດລະບຽບບ້ານ;

**ຂັ້ນຕອນທີ 4:** ນຳເອົາກົດລະບຽບບ້ານໄປຜ່ານຫ້ອງການຍຸຕິທຳມີຄຳເຫັນ;

**ຂັ້ນຕອນທີ 5:** ສະເໜີເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຮັບຮອງ;

**ຂັ້ນຕອນທີ 6:** ປະກາດ ແລະ ເຜີຍແຜ່ແນະນຳຈັດຕັ້ງປະຕິບັດ.

## 5. ເນື້ອໃນ ແລະ ໂຄງຮ່າງພື້ນຖານຂອງລະບຽບບ້ານ

ເນື້ອໃນຂອງກົດລະບຽບບ້ານແມ່ນໃຫ້ຕິດພັນກັບໜ້າທີ່ຄວາມຮັບຜິດຊອບ ແລະ ການເຄື່ອນໄຫວຂອງ 5 ໜ່ວຍງານຊ່ວຍວຽກບ້ານ ຄື: ວຽກງານພັກ ແລະ ອົງການຈັດຕັ້ງມະຫາຊົນ, ວຽກງານບໍລິຫານ ແລະ ການປົກຄອງ, ວຽກງານເສດຖະກິດ-ການເງິນ, ວຽກງານວັດທະນະທຳ-ສັງຄົມ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ນອກຈາກທີ່ກ່າວມາຂ້າງເທິງນັ້ນແລ້ວ ໃນການສ້າງກົດລະບຽບບ້ານຈະຕ້ອງເອົາໃຈໃສ່ບາງບັນຫາ ດັ່ງນີ້:

1) ການກຳນົດຂອບເຂດ ແລະ ເປົ້າໝາຍການນຳໃຊ້

ການກຳນົດຂອບເຂດ ແລະ ເປົ້າໝາຍການນຳໃຊ້ຂອງກົດລະບຽບບ້ານ ແມ່ນຕ້ອງໃຫ້ມີຄວາມຮັດກຸມ, ສາມາດຄຸ້ມຄອງ ແລະ ປົກປ້ອງສິດຜົນປະໂຫຍດລວມຂອງບ້ານ, ຂອງປະຊາຊົນບັນດາເຜົ່າ ແລະ ມີຜົນບັງຄັບໃຊ້ສະເພາະຂອບເຂດພາຍໃນບ້ານ.

2) ການກຳນົດນະໂຍບາຍ

ການກຳນົດນະໂຍບາຍຢູ່ໃນ ກົດລະບຽບບ້ານເປັນສິ່ງໜຶ່ງທີ່ສຳຄັນ ຜູ້ທີ່ເອົາໃຈໃສ່ເຄົາລົບ ແລະ ປະຕິບັດກົດລະບຽບບ້ານໄດ້ດີ ຕ້ອງໄດ້ຮັບການຍ້ອງຍໍສັນລະເສີນ ຫຼື ມີນະໂຍບາຍໃດໜຶ່ງທີ່ເໝາະສົມ.

ນອກຈາກນີ້ ກໍ່ຕ້ອງໃຫ້ຄຳນຶງເຖິງນະໂຍບາຍຕໍ່ກັບຜູ້ທີ່ທຸກຍາກຂາດເຂີນ, ຜູ້ເຖົ້າຜູ້ແກ່, ຜູ້ເສຍອົງຄະ, ຜູ້ມີລູກໄປເປັນທະຫານພັນທະສັບໃຊ້ຊາດ, ຜູ້ທຳປະໂຫຍດ ຫຼື ເສຍສະຫຼະໃຫ້ແກ່ບ້ານ. ການອອກລະບຽບບ້ານແມ່ນບໍ່ໃຫ້ມີເປົ້າໝາຍເພື່ອການຫາລາຍໄດ້ ແລະ ສ້າງຄວາມຫຍຸ້ງຍາກສັບສົນໃຫ້ແກ່ການດຳລົງຊີວິດຂອງປະຊາຊົນ.

3) ການກຳນົດມາດຕະການ

ການກຳນົດມາດຕະການ ແມ່ນວິທີການໜຶ່ງ ເພື່ອເຮັດໃຫ້ບຸກຄົນຕ້ອງເຄົາລົບ ແລະ ປະຕິບັດຕາມກົດລະບຽບ. ການກຳນົດມາດຕະການ ຕ້ອງໃຫ້ສົມເຫດສົມຜົນ, ບໍ່ໜັກ ຫຼື ເບົາເກີນໄປ ແລະ ຕ້ອງຢູ່ບົນພື້ນຖານທີ່ບໍ່ຂັດກັບກົດໝາຍ ຊຶ່ງການໃຊ້ມາດຕະການມີຫຼາຍຮູບການທີ່ແຕກຕ່າງກັນ ເປັນຕົ້ນ ການໃຊ້ແທນ, ການປັບໃໝຕ້ອງກຳນົດຂອບເຂດສູງສຸດ, ການປະຕິບັດກິດຈະກຳທີ່ເປັນສາທາລະນະປະໂຫຍດໃຫ້ບ້ານ ແລະ ອື່ນໆ.

6. ການຈັດຕັ້ງປະຕິບັດ

- ມອບໃຫ້ກົມການປົກຄອງທ້ອງຖິ່ນ ກະຊວງພາຍໃນ ເປັນເຈົ້າການໃນການຈັດຕັ້ງ ເຜີຍແຜ່, ເຊື່ອມຊຶມ ແນະນຳ, ຕິດຕາມ ແລະ ກວດກາຜົນການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ;
- ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນເຜີຍແຜ່, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ໃຫ້ເປັນເອກະພາບກັນ.

ລັດຖະມົນຕີ

ຄຳເພັ່ນ ສູນວິເລີດ